ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມພາສີ

ເລກທີ 04445 / ກພສ

ນະຄອນຫຼວງວຽງຈັນ, ວັນທີ 13 ກັນຍາ 2021

# ແຈ້ງການ

ເຖິງ: - ກອງຄຸ້ມຄອງພາສີ I-VII,

- ດ່ານພາສີສາກົນ ໃນຂອບເຂດທົ່ວປະເທດ,
- ບັນດາທ່ານຜູ້ປະກອບການທີ່ດຳເນີນທຸລະກິດນຳເຂົ້າສິນຄ້າປະເພດ ແກັດເຈ້ຍ.

ເລື່ອງ : ການຄຸ້ມຄອງກວດກາການນຳເຂົ້າ ສິນຄ້າປະເພດແກັດເຈ້ຍສຳເລັດຮູບທີ່ມາບັນຈຸຜະລິດຕະພັນກະສິກຳ.

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 81/ສພຊ, ລົງວັນທີ 29 ມິຖຸນາ 2020;
- ອີງຕາມ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14 /ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມ ຂໍ້ຕົກລົງຂອງກະຊວງການເງິນ ສະບັບເລກທີ 2059/ກງ, ລົງວັນທີ 29 ເມສາ 2021 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກົມພາສີ;
- ອີງຕາມ ແຈ້ງການຂອງກົມພາສີ ສະບັບເລກທີ 03414/ກພສ, ລົງວັນທີ 22 ກໍລະກົດ 2021;

ກົມພາສີ ຂໍແຈ້ງມາຍັງທ່ານຊາບວ່າ ໃນການນຳເຂົ້າສິນຄ້າ ປະເພດແກັດເຈ້ຍສຳເລັດຮູບ ທີ່ມາບັນຈຸຜະລິດຕະພັນກະສິກຳ (ໝາກໂມ, ໝາກກ້ວຍ ແລະ ອື່ນໆ) ທີ່ໄດ້ຮັບນະໂຍບາຍດ້ານພາສີ ອາກອນ ໃນຮູບແບບງົດເກັບພາສີອາກອນ ເພື່ອໃຫ້ສອດຄ່ອງ ຕາມກົດໝາຍວ່າດ້ວຍພາສີ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ໃຫ້ປະຕິບັດດັ່ງລຸ່ມນີ້:

1. ບໍລິສັດຜູ້ນຳເຂົ້າສິນຄ້າ ປະເພດແກັດເຈ້ຍສຳເລັດຮູບທີ່ມາບັນຈຸຜະລິດຕະພັນກະສິກຳ (ໝາກໂມ, ໝາກກ້ວຍ ແລະ ອື່ນໆ) ທີ່ໄດ້ຮັບຮອງແຜນນຳເຂົ້າປີ 2021 ຈາກຂະແໜງແຜນການ ແລະ ການລົງທຶນ ຕາມກົດໝາຍວ່າດ້ວຍສົ່ງເສີມການລົງທຶນ ແລະ ລະບຽບການກ່ຽວຂ້ອງ ແມ່ນໃຫ້ປະຕິບັດຕາມແຜນດັ່ງກ່າວ ຢ່າງເປັນເອກະພາບ;
2. ມອບໃຫ້ກອງຄຸ້ມຄອງພາສີ I-VII ແຈ້ງໃຫ້ບໍລິສັດຜູ້ນຳເຂົ້າສິນຄ້າປະເພດດັ່ງກ່າວຊາບ ແລະ ໃຫ້ບໍລິສັດ ດຳເນີນການແຈ້ງພາສີເປັນລາຍລະອຽດຢູ່ດ່ານພາສີສາກົນບ່ອນນຳເຂົ້າ ຕາມນຳແນະນຳຂອງກະຊວງການເງິນກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍພາສີ ສະບັບເລກທີ 3269/ກງ, ລົງວັນທີ 26 ກໍລະກົດ 2021 ແລະ ບົດແນະນຳຂອງກົມພາສີ ສະບັບເລກທີ 00097/ກພສ, ລົງວັນທີ 06 ມັງກອນ 2017 ຢ່າງເຂັ້ມງວດ;
3. ສຳລັບບໍລິສັດທີ່ໄດ້ນະໂຍບາຍສົ່ງເສີມການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 12 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ທີ່ໄດ້ນຳເຂົ້າໃນຮູບແບບຄໍ້າປະກັນ ຕາມລະບອບ IM8, ມອບໃຫ້ຫົວໜ້າດ່ານພາສີຊາຍແດນບ່ອນແຈ້ງນຳເຂົ້າ ແຈ້ງໃຫ້ບໍລິສັດມາສະສາງເອກະສານຕາມລະບຽບການ;

4. ໃນການຈັດຕັ້ງປະຕິບັດຕົວຈິງຫາກພົບຂໍ້ຫຍຸ້ງຍາກໃຫ້ເປັນເຈົ້າການ ໃນການຄົ້ນຄວ້າລາຍງານກົມພາສີ ເພື່ອມີທິດຊີ້ນຳໃນການແກ້ໄຂໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການ;
5. ແຈ້ງການສະບັບນີ້ປ່ຽນແທນແຈ້ງການຂອງກົມພາສີ ສະບັບເລກທີ 03414/ກພສ, ລົງວັນທີ 22 ກໍລະກົດ 2021 ແລະ ມີຜົນສັກສິດນັບຕັ້ງແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ໃຫ້ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ຫົວໜ້າກົມພາສີ**

ກະຊວງ ການເງິນ
ກົມພາສີ

**ພູເຂົາຄຳ ວັນນະວົງໄຊ**

**ບ່ອນສົ່ງ:**

| | |
|---|---|
| - ທ່ານຄະນະກົມພາສີ, ທ່ານລະ | 01 ສະບັບ "ເພື່ອຊາບ" |
| - ພະແນກຄຸ້ມຄອງການຍົກເວັ້ນ ແລະ ງົດເກັບພາສີ | 01 ສະບັບ "ເພື່ອຊາບ ແລະ ຕິດຕາມການຈັດຕັ້ງປະຕິບັດ" |
| - ພະແນກນິຕິກຳ | 01 ສະບັບ "ເພື່ອຊາບ ແລະ ຕິດຕາມການຈັດຕັ້ງປະຕິບັດ" |
| - ສຳເນົາ | 01 ສະບັບ. |